**ມິຊຊາອາທິດທີ 24 ກຳນົດທຳມະດາ ປີ B**

**ວັນທີ 12 ກັນຍາ 2021**



**ພຣະວໍລະສານໂດຍນັກບຸນມັກໂກ 8, 27-35**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດໄປໃນເຂດເມືອງເຊຊາເຣແຫ່ງຟີລິບພ້ອມກັບພວກສາວົກ. ໃນເວລາເດີນທາງຢູ່ນັ້ນ, ພຣະອົງຊົງຖາມພວກເຂົາວ່າ: “ຄົນທັງຫລາຍເວົ້າກັນວ່າ ເຮົາແມ່ນໃຜ?” ພວກເຂົາທູນຕອບວ່າ: “ລາງຄົນວ່າແມ່ນຢວງບັບຕິສຕາ, ລາງຄົນວ່າແມ່ນປະພາສົກເອລີ, ລາງຄົນວ່າແມ່ນປະພາສົກອົງໃດອົງໜຶ່ງ”. ພຣະອົງຈຶ່ງຖາມພວກເຂົາອີກວ່າ: “ສ່ວນພວກເຈົ້າ, ພວກເຈົ້າວ່າເຮົາແມ່ນໃຜ?” ເປໂຕທູນຕອບວ່າ: “ພຣະອົງແມ່ນພຣະກຣິສໂຕ”.

ພຣະອົງຊົງຫ້າມພວກເຂົາບໍ່ໃຫ້ເວົ້າສູ່ໃຜຟັງເດັດຂາດ. ແລ້ວພຣະອົງໄດ້ລົງມືສອນໃຫ້ພວກເຂົາຮູ້ວ່າບຸດມະນຸດຈະຕ້ອງທົນທໍຣະມານຫລາຍ, ຕ້ອງຖືກພວກອາວຸໂສ, ພວກຫົວໜ້າສົງແລະນັກກົດໝາຍປະຖິ້ມ, ຕ້ອງຖືກປະຫານຊີວິດ ແລະກັບຄືນຊີບໃນມື້ທີສາມຕໍ່ມາ. ພຣະເຢຊູເຈົ້າຊົງບອກເລື້ອງນີ້ຢ່າງເປີດເຜີຍ. ເປໂຕຈຶ່ງພາພຣະອົງໄປຕ່າງຫາກແລະຕິຕຽນພຣະອົງ.

ສ່ວນພຣະເຢຊູເຈົ້າຊົງຫັນຄືນມາເບິ່ງພວກສາວົກ ແລ້ວເວົ້າຮ້າຍເປໂຕ ຢ່າງແຮງວ່າ: “ຜີຊາຕານ, ໜີໄປໃຫ້ພົ້ນ, ຄວາມຄຶດຂອງເຈົ້າ ບໍ່ແມ່ນຄວາມຄຶດຂອງພຣະເຈົ້າ, ແຕ່ແມ່ນຄວາມຄຶດຂອງມະນຸດ”. ແລ້ວພຣະອົງຊົງຮຽກຝູງຊົນ ພ້ອມກັບພວກສາວົກເຂົ້າມາ ກ່າວວ່າ: “ຜູ້ໃດຢາກມານຳເຮົາ, ກໍໃຫ້ສະລະປະຕົວເອງ, ໃຫ້ແບກກາງເຂນຂອງຕົນແລະຕາມຫລັງເຮົາມາ. ດ້ວຍວ່າຜູ້ໃດຢາກຊ່ວຍຊີວິດຂອງຕົນໄວ້, ກໍຈະທຳໃຫ້ມັນເສຍໄປ; ສ່ວນຜູ້ໃດຍອມສະລະຊີວິດຂອງຕົນ ເພື່ອເຮົາແລະພຣະວໍຣະສານ, ຜູ້ນັ້ນ ກໍຈະຊ່ວຍຊີວິດຂອງຕົນໃຫ້ຮອດ”.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 8, 27-35**

ຫລັງຈາກພາລະກິດການເທດສອນແລະປິ່ນປົວພະຍາດໂລຄາຕ່າງໆໃນເຂດແຂວງກາລິເລ. ພຣະເຢຊູເຈົ້າພ້ອມກັບພວກສາວົກໄດ້ພາກັນມຸ່ງສູ່ນະຄອນເຢລູຊາແລມບ່ອນທີ່ພຣະອົງຈະຮັບທໍລະມານແລະຕາຍ. ລະຫວ່າງທາງ, ພຣະອົງໄດ້ຖາມພວກສາວົກກ່ຽວກັບຄວາມຄິດເຫັນຂອງຄົນທົ່ວໄປເຖິງຕົວຂອງພຣະອົງ. ແລະເປັນຕົ້ນພຣະເຢຊູເຈົ້າໄດ້ຖາມພວກສາວົກແຕ່ລະຄົນຜູ້ທີ່ໄດ້ກິນໄດ້ດື່ມຮ່ວມກັບພຣະອົງ, ຜູ້ທີ່ໄດ້ເຫັນວຽກງານການປະກາດອານາຈັກຂອງພຣະອົງ ສຳລັບພວກເຂົາ, ພຣະອົງແມ່ນໃຜ? ເປັນຫຍັງພຣະເຢຊູເຈົ້າຈຶ່ງຖາມຄຳຖາມນີ້ກັບພວກສາວົກ? ອາດຈະແມ່ນພຣະອົງເຫັນວ່າຄວາມເຂົ້າໃຈຂອງພວກສາວົກກ່ຽວກັບຕົວຂອງພຣະອົງເປັນຄວາມເຂົ້າໃຈແບບພາຍນອກເໝືອນກັບຝູງຊົນທີ່ຕິດຕາມພຣະອົງມາ. ພວກເຂົານິຍົມຊົມຊອບພຣະອົງຍ້ອນພຣະອົງທຳໃນສິ່ງທີ່ພວກເຂົາຕ້ອງການ. ພວກເຂົາຕິດຕາມພຣະອົງຍ້ອນຫວັງຈະໄດ້ມີສະພາບຊີວິດດີຂຶ້ນກວ່າເກົ່າ. ເພາະສະນັ້ນ, ພຣະເຢຊູເຈົ້າຈຶ່ງຖາມພວກສາວົກເໝືອນກັບຖາມຝູງຊົນວ່າ: ສຳລັບພວກເຈົ້າ ເຮົາແມ່ນໃຜ? ຄຳຖາມນີ້ເບິ່ງຄືບໍ່ງ່າຍສຳລັບພວກເຂົາ ເພາະມີແຕ່ເປໂຕທີ່ສາມາດຕອບໄດ້: ພຣະອົງແມ່ນພຣະກຣິສໂຕ. ເຖິງວ່າຄຳຕອບນີ້ຈະຖືກຕ້ອງ, ແຕ່ໃນຄວາມເປັນຈິງເປໂຕໄດ້ເຂົ້າໃຈໃນຄຳຕອບຂອງຕົນບໍ? ຖ້າເປໂຕເຂົ້າໃຈຄຳວ່າ ພຣະກຣິສໂຕ ໝາຍເຖິງຜູ້ທີ່ຖືກສົ່ງມາໃນໂລກນີ້ເພື່ອຮັບໃຊ້ຄົນອື່ນຈົນເຖິງສະລະຊີວິດຂອງຕົນເພື່ອຄວາມຮອດຂອງມະນຸດທຸກຄົນ; ເປໂຕຄົງຈະບໍ່ຫ້າມພຣະເຢຊູເຈົ້າໃຫ້ໄປຮັບທົນທໍລະມານແລະຕາຍ. ເພາະຄວາມຄິດຂອງເປໂຕຍັງເປັນຄວາມຄິດແບບມະນຸດ ໝາຍວ່າຄວາມຄິດທີ່ເຫັນແກ່ຕົວແລະຂາດຄວາມຮັກ. ດັ່ງນັ້ນພຣະເຢຊູເຈົ້າຈຶ່ງຕິຕຽນເຂົາວ່າ: ຄວາມຄິດຂອງເຈົ້າບໍ່ແມ່ນຄວາມຄິດຂອງພຣະເຈົ້າ ແຕ່ແມ່ນຄວາມຄິດຂອງມະນຸດ.

ວັນນີ້, ພຣະເຢຊູເຈົ້າກໍສືບຕໍ່ຖາມພວກເຮົາເຖິງຕົວຂອງພຣະອົງວ່າ: ສຳລັບພວກເຮົາ, ພຣະອົງແມ່ນໃຜ? ແນ່ນອນຄຳຕອບຂອງພວກເຮົາແຕ່ລະຄົນກໍຈະບໍ່ເໝືອນກັນ. ຍ້ອນພວກເຮົາຢາກໃຫ້ພຣະອົງເປັນດັ່ງທີ່ພວກເຮົາຢາກໃຫ້ເປັນ. ແຕ່ພວກເຮົາລືມໄປວ່າ ພຣະອົງແມ່ນພຣະກຣິສໂຕ ຜູ້ທີ່ມາໃນໂລກນີ້ເພື່ອໄຖ່ກູ້ພວກເຮົາໃຫ້ຮອດຈາກບາບ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດເປີດໄຂສະຕິປັນຍາແລະດວງໃຈລູກໃຫ້ຮູ້ຈັກແລະເຊື່ອຢ່າງຈິງໃຈວ່າ ພຣະອົງແມ່ນພຣະກຣິສໂຕ, ພຣະບຸດຂອງພຣະເຈົ້າ. ພຣະອົງມາໃນໂລກນີ້ເພື່ອຊ່ວຍລູກແລະເພື່ອຊ່ວຍມວນມະນຸດທຸກຄົນໃຫ້ຫວິດຈາກບາບອັນນຳໄປສູ່ຄວາມຕາຍ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ